**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0459 /ອຄ.ສລທ

ນະຄອນຫຼວງວຽງຈັນ, ວັນທີ 1 ມິນາ 2012

# ແຈ້ງການ

**ເຖິງ :** ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

**ເລື່ອງ :** ການຮັບໂອນວຽກງານຈາກພາກສ່ວນແຜນການ ແລະ ການລົງທຶນ

ເພື່ອໃຫ້ວຽກງານການຂຶ້ນທະບຽນວິສາຫະກິດ ສຳລັບການລົງທຶນໃນກິດຈະການທົ່ວໄປ ໄດ້ຮັບການຈັດຕັ້ງປະຕິບັດ ສອດຄ່ອງກັບເນື້ອໃນຈິດໃຈຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນທົ່ວໄປ ໂດຍສະເພາະແມ່ນບົດບັນທຶກການມອບຮັບວຽກງານການສົ່ງເສີມການລົງທຶນ ລະຫວ່າງກະຊວງແຜນການ ແລະ ການລົງທຶນ ກັບກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 10/10/2011 ; ແລະ ແຈ້ງການ, ເລກທີ 624/ກລທ, ລົງວັນທີ 6/10/2011, ເລື່ອງການຍື່ນເອກະສານກ່ຽວກັບວຽກງານລົງທຶນ.

ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງໃຫ້ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້ :

1. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ຮີບຮ້ອນປະສານກັບ ພາກສ່ວນແຜນການ ແລະ ການລົງທຶນ ຂັ້ນທ້ອງຖິ່ນຂອງຕົນ ເພື່ອຮັບເອົາວຽກຂຶ້ນທະບຽນວິສາຫະກິດ ສຳລັບການລົງທຶນໃນກິດຈະການທົ່ວໄປທັງໝົດ (ທັງພາຍໃນ ແລະ ຕ່າງປະເທດ) ເພື່ອດຳເນີນການຂຶ້ນທະບຽນວິສາຫະກິດ ພາຍໃຕ້ລະບົບການບໍລິການ ທີ່ມີຢູ່ແລ້ວໃນປະຈຸບັນ (ບໍ່ໃຫ້ແກ່ຍາວອີກ) ;

2. ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງໃດ ຫາກຍັງບໍ່ທັນແຈ້ງ ໃນເລື່ອງໃດກ່ຽວກັບການບໍລິການຂຶ້ນທະບຽນວິສາຫະກິດ ສຳລັບການລົງທຶນໃນກິດຈະການທົ່ວໄປ ແມ່ນໃຫ້ປະສານຂໍການຊີ້ນຳ ຫລື ຄຳປຶກສາລະອຽດ ແລະ ໂດຍກົງ ນຳກົມສົ່ງເສີມການລົງທຶນທົ່ວໄປ ;

3. ຫຼັງຈາກຮັບວຽກຈາກພາກສ່ວນແຜນການ ແລະ ການລົງທຶນມາແລ້ວ, ສຳລັບແຂວງທີ່ຍັງບໍ່ທັນໄດ້ສ້າງຕັ້ງ ໃຫ້ຮີບຮ້ອນສ້າງຕັ້ງໃຫ້ສຳເລັດໂດຍໄວ :

- ຂະແໜງສົ່ງເສີມການລົງທຶນທົ່ວໄປ ;
- ຄະນະປະສານງານບໍລິການປະຕູດຽວ ສຳລັບການສົ່ງເສີມການລົງທຶນໃນກິດຈະການທົ່ວໄປ - ອາດເບິ່ງຕາມແບບຢ່າງ ຂໍ້ຕົກລົງຂອງກະຊວງ ອຄ (ຄັດຕິດມາພ້ອມນີ້) ຫລື ຂອງນະຄອນຫຼວງກໍໄດ້.

4. ການຂຶ້ນທະບຽນວິສາຫະກິດ ແມ່ນຕ້ອງປະຕິບັດຢ່າງເຂັ້ມງວດ ຕາມລະບົບນິຕິກຳ ໃໝ່ທີ່ໄດ້ປະກາດໃຊ້ ລວມທັງອັນເກົ່າທີ່ຍັງບໍ່ທັນລົບລ້າງ ຫລື ມີນິຕິກຳໃໝ່ປ່ຽນແທນ, ໃນນີ້ ຕົ້ນຕໍແມ່ນຕ້ອງເຂັ້ມງວດກັບ :

- ການຂຶ້ນທະບຽນວິສາຫະກິດ ຕາມການແບ່ງຂັ້ນຄຸ້ມຄອງ ;
- ຂໍ້ຫ້າມສຳລັບຄົນຕ່າງປະເທດ ເຊັ່ນ ອາຊີບ ຫລື ທຸລະກິດສະຫງວນ ;
- ສຳລັບຊາວຕ່າງປະເທດທີ່ທຳມາຄ້າຂາຍ ບໍ່ຖືກຕ້ອງ ກໍໃຫ້ປະຕິບັດຕາມ ບົດແນະນຳຈັດຕັ້ງປະຕິບັດດຳລັດ 03/ນຍ, ສະບັບເລກທີ 0288/ອຄ.ສລທ ຢ່າງເຂັ້ມງວດ .

5. ເມື່ອສ້າງຕັ້ງຂະແໜງສົ່ງເສີມການລົງທຶນທົ່ວໄປແລ້ວ ໃຫ້ແຈ້ງໃຫ້ກົມສົ່ງເສີມການລົງທຶນທົ່ວໄປ ກ່ຽວກັບຄວາມພ້ອມ ຫລື ບັນຫາດ້ານ ບຸກຄະລະກອນ, ລະບົບເຄື່ອງມື ແລະ ອື່ນໆ ເພື່ອຊ່ວຍຊີ້ນຳການຈັດຕັ້ງປະຕິບັດລະອຽດໃຫ້ມີປະສິດທິຜົນ ສອດຄ່ອງກັບລະບຽບ ກົດໝາຍ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ**

ດຣ. ນາມ ວິຍະເກດ